ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0613/ກປ.05

ນະຄອນຫຼວງວຽງຈັນ,ວັນທີ 08 JUL 2005

# ຄຳສັ່ງ

## ຂອງ ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ ຂີ້ເຈຍ ຢູ່ພາຍໃນປະເທດ

ເຖິງ: ທົ່ວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ

- ອີງຕາມ ກົດໝາຍ ວ່າດ້ວຍ ກະສິກຳ ເລກທີ 01 / 98 / ສພຊ, ລົງວັນທີ 10 / 10 / 1995, ມາດຕາ 52 ຝຸ່ນ ແລະ ອາຫານສັດ .
- ອີງຕາມ ຄຳສັ່ງແນະນຳເພີ່ມເຕີມ ວ່າດ້ວຍການເກືອດຫ້າມ ບໍ່ໃຫ້ຂຸດຄົ້ນຂີ້ເຈຍ ສົ່ງອອກຂາຍຕ່າງປະເທດ ສະບັບ ເລກທີ 2058/ກປ.99, ລົງວັນທີ 20/12/1999 .
- ອີງໃສ່ ຄວາມຮຽກຮ້ອງຕ້ອງການ ທາງດ້ານວັດຖຸດິບ ເຂົ້າໃນການຜະລິດຝຸ່ນຊີວະພາບ ຢູ່ພາຍໃນ ປະເທດເຮົາ.

ເພື່ອຍົກຜະລິດຕະພາບ ໃນການປູກຝັງ ປະຈຸບັນ ສປປ ລາວ ໄດ້ນຳເຂົ້າ ຝຸ່ນເຄມີ ມາໃຊ້ໃນການຜະລິດກະສິກຳ ຢ່າງຫຼວງຫຼາຍ ປີໜຶ່ງຕົກເປັນເງິນ 2-3 ລ້ານກວ່າໂດລາ. ສະນັ້ນ ຈຶ່ງເຮັດໃຫ້ ຜົນຜະລິດການປູກຝັງ ຂອງ ປະເທດເຮົາ ໄດ້ເພີ້ມຂຶ້ນ ຫຼາຍແສນໂຕນຕໍ່ປີ ແລະ ຄຽງຄູ່ກັບ ການເພີ້ມຂຶ້ນ ຂອງຜົນຜະລິດ ຈາກການປູກຝັງ ດັ່ງກ່າວມານັ້ນ ໄດ້ເຮັດໃຫ້ ທາດອາຫານ N, $P_2O_5$, $K_2O$ ແລະ ທາດອື່ນໆໃນດິນໄປຫລໍ່ລ້ຽງຕົ້ນພືດ ກໍສູນເສຍຫຼາຍແສນໂຕນ ຕໍ່ປີ ເຊັ່ນດຽວກັນ. ສະນັ້ນ ເພື່ອເປັນການປັບປຸງດິນ ໃຫ້ມີຄວາມອຸດົມ ສົມບູນ ຈຶ່ງມີຄວາມຈຳເປັນ ຕ້ອງໄດ້ໃຊ້ຝຸ່ນອິນຊີວັດຖຸ ປະເພດຕ່າງໆເຊັ່ນ: ຂີ້ເຈຍ, ຂີ້ອ້ອຍ, ຂີ້ແກບ ຂີ້ສັດ ຊຶ່ງແມ່ນ ຝຸ່ນທຳມະຊາດ ທີ່ມີຢູ່ໃນຊົນນະບົດ ຂອງ ສປປ ລາວ ແລະ ເໝາະສົມ ທີ່ເປັນທາດອາຫານ ຂອງພືດ ແລະ ທັງເປັນການຊ່ວຍ ໃນການປັບປຸງດິນ ໂດຍໃຊ້ຄວບຄູ່ກັບ ຝຸ່ນວິທະຍາສາດເພື່ອເຮັດໃຫ້ດິນ ມີຄວາມອຸດົມ ສົມບູນດີຂຶ້ນ . ສຳລັບ ຂີ້ເຈຍ ແມ່ນ ຝຸ່ນອິນຊີວັດຖຸ ທີ່ມີຄຸນນະພາບດີຊຶ່ງປະກອບດ້ວຍ ທາດ ອາຫານຫຼັກ ຫຼາຍທາດ ເຊັ່ນ : ທາດອາລົດ (N), ຟົດສະຟໍ ($P_2O_5$), ໂປຕາສ ($K_2O$) ແລະ ກາກບອນ (C) ນອກຈາກນັ້ນ ຍັງບັນຈຸ ອິນຊີ ວັດຖຸອື່ນໆອີກ ໃນປະຈຸບັນ ຝຸ່ນຂີ້ເຈຍ ໄດ້ຖືກລັກລອບສົ່ງໄປຂາຍຕ່າງປະເທດ ອັນໄດ້ເຮັດໃຫ້ ຝຸ່ນດັ່ງກ່າວ ບໍ່ພຽງພໍ ສຳລັບການຜະລິດ ຝຸ່ນເອງໃນປະເທດເຮົາ

ໂດຍເຫັນໄດ້ຄວາມສຳຄັນ ຂອງວຽກງານ ການປັບປຸງບຳລຸງດິນເຮັດໃຫ້ດິນ ມີຄວາມອຸດົມສົມບູນ ເຮັດການຜະລິດໄດ້ຢ່າງຍາວນານ ແລະ ໝັ້ນຄົງ ທັງເປັນການປະຢັດ ຫຼຸດຜ່ອນ ເງິນຕາໃນການຊື້ຝຸ່ນເຄມີ ຈາກຕ່າງປະເທດ. ເພື່ອປົກປັກຮັກສາ ຂີ້ເຈຍ ໄວ້ນຳໃຊ້ເຂົ້າໃນ ການປັບປຸງ ບຳລຸງດິນ ໃຫ້ດິນມີຄວາມ ອຸດົມສົມບູນ ຕາມແຜນ ນະໂຍບາຍ ການຜະລິດ ກະສິກຳສະອາດ ຂອງ ລັດຖະບານ.

**ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ອອກ ຄຳສັ່ງ ດັ່ງນີ້:**

1. ໃຫ້ສືບຕໍ່ປະຕິບັດ ຕາມຄຳສັ່ງແນະນຳ ຂອງ ລັດຖະມົນຕີ ສະບັບ ເລກທີ 2058/ກປ.99, ລົງວັນທີ 20/12/1999 ວ່າດ້ວຍ ການເກືອດຫ້າມ ການຂຸດຄົ້ນ ຂີ້ເຈຍ ສົ່ງອອກຂາຍ ຕ່າງປະເທດ.
2. ຫ້າມອົງການຈັດຕັ້ງຂອງລັດ, ລວມໝູ່, ເອກະຊົນ, ລັດວິສາຫະກິດ ສົ່ງຂີ້ເຈຍອອກຂາຍຕ່າງປະເທດ ຖ້າທ້ອງຖິ່ນ, ກົມກອງ, ຫົວໜ່ວຍທຸລະກິດໃດ ຫາກຂຸດຄົ້ນຂີ້ເຈຍ ອອກຂາຍຕ່າງປະເທດ ໃຫ້ຢຸດ ເຊົານັບແຕ່ມື້ໄດ້ຮັບຄຳສັ່ງແນະນຳສະບັບນີ້ ກໍລະນີຂຸດຄົ້ນມາໄວ້ແລ້ວໃນສາງ ກໍ່ໃຫ້ນຳໄປບໍລິການ ຮັບໃຊ້ການຜະລິດ ກະສິກຳ ຢູ່ພາຍໃນປະເທດ .
3. ຊຸກຍູ້ ໃຫ້ບັນດາ ຊາວກະສິກອນ ນຳໃຊ້ຂີ້ເຈຍ ເຂົ້າສູ່ການປະຕິບັດ ເຕັກນິກກະເສດສຸມ ລະດັບສູງ ເພື່ອຍົກຜະລິດຕະພາບການປູກຝັງໃຫ້ສູງຂຶ້ນ ຕາມແນວທາງ ກະສິກຳສະອາດ ທີ່ພັກໄດ້ກຳນົດໄວ້.
4. ໃຫ້ຮັກສາ ຂີ້ເຈຍໄວ້ ເປັນວັດຖຸດິບ ເພື່ອການຕອບສະໜອງ ໃຫ້ແກ່ ການຜະລິດ ຝຸ່ນຊີວະພາບ ຂອງ ບັນດາ ໂຮງງານຝຸ່ນຊີວະພາບ ພາຍໃນປະເທດ ທີ່ ລັດຖະບານໄດ້ອະນຸມັດ ສ້າງຕັ້ງ ມາກ່ອນ ແລ້ວນັ້ນ ເພື່ອປັບປຸງ ຄຸນນະພາບ ຂອງ ຝຸ່ນຊີວະພາບ ໃຫ້ດີຂຶ້ນ.
5. ມອບໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ ແລະ ເຂດພິເສດ ປະສານສົມທົບ ກັບ ອຳນາດການປົກຄອງທ້ອງຖິ່ນ ແລະ ຮາກຖານ ດຳເນີນການເຜີຍແຜ່ ສຶກສາອົບຮົມປະຊາຊົນ ໃຫ້ເຊື່ອມຊຶມ ແລະ ເຂົ້າໃຈ ເຖິງຄຸນປະໂຫຍດ ຂອງ ຂີ້ເຈຍ ເພື່ອນຳໃຊ້ເປັນ ຝຸ່ນຊີວະພາບ ທີ່ດີ .
6. ເມື່ອໄດ້ຮັບ ຄຳສັ່ງ ສະບັບນີ້ແລ້ວ ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ສົມທົບກັບ ອຳນາດການປົກຄອງທ້ອງຖິ່ນ ພ້ອມກັນຈັດຕັ້ງປະຕິບັດ ຄຳສັ່ງສະບັບ ນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ. ພ້ອມກັນນັ້ນ ໃນແຕ່ລະໄລຍະ ຂອງການ ຈັດຕັ້ງ ປະຕິບັດ ແມ່ນໃຫ້ລາຍງານ ມາຍັງ ກະຊວງ ກະສິກຳ ແລະ ປ່າໄມ້ ຊາບ.

ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ສຸ່ຍ ສະພັງທອງ

<u>ບ່ອນນຳສົ່ງ</u> :

- ຫ້ອງວ່າການສຳນັກງານນາຍົກ 1 ສະບັບ
  "ເພື່ອໃຊ້ຕາງລາຍງານ"
- ຫ້ອງການ ກະຊວງ ການຄ້າ 1 ສະບັບ
  "ເພື່ອຂໍຄວາມຮ່ວມມື "
- ຫ້ອງການ ກະຊວງ ການເງິນ 1 ສະບັບ
  "ເພື່ອຂໍຄວາມຮ່ວມມື "
- ກອງສົ່ງເສີມ ກປ 1 ສະບັບ
  "ເພື່ອຊຸກຍູ້ ແລະ ຕິດຕາມ"
- ກົມປູກຝັງ"ເພື່ອຕິດຕາມແລະກວດກາ" 1 ສະບັບ
- ກົມແຜນການ "ເພື່ອຕິດຕາມ" 1 ສະບັບ
- ກົມກວດກາ "ເພື່ອກວດກາ" 1 ສະບັບ
- ເກັບມ້ຽນ 1 ສະບັບ